ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 10 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 10 JUN 2021

# ຂໍ້ຕົກລົງ
# ວ່າດ້ວຍການຮັບຮອງເປັນທະນາຄານດູແລຊັບສິນ (ສະບັບປັບປຸງ)

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ ລົງວັນທີ 3 ທັນວາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 291/ນຍ, ລົງວັນທີ 5 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 146/ສຄຄຊ, ລົງວັນທີ 27 ພຶດສະພາ 2021.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດ ລະບຽບການ ແລະ ມາດຕະການ ກ່ຽວກັບການໃຫ້ບໍລິການຂອງທະນາຄານດູແລຊັບສິນ ເພື່ອອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃຫ້ແກ່ການບໍລິການຂອງທະນາຄານດູແລຊັບສິນ ແນໃສ່ຮັບປະກັນເຮັດໃຫ້ການບໍລິການດັ່ງກ່າວມີ ປະສິດທິພາບ, ຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 2 (ປັບປຸງ) ການຮັບຮອງເປັນທະນາຄານດູແລຊັບສິນ**

ການຮັບຮອງເປັນທະນາຄານດູແລຊັບສິນ ແມ່ນການອະນຸຍາດໃຫ້ທະນາຄານທຸລະກິດພາຍໃນ ສປປ ລາວ ທີ່ສ້າງຕັ້ງຢ່າງຖືກຕ້ອງຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຫຼື ທະນາຄານທຸລະກິດຕ່າງປະເທດທີ່ຕັ້ງຢູ່ ສປປ ລາວ ໃຫ້ສາມາດເຄື່ອນໄຫວເປັນທະນາຄານດູແລຊັບສິນຢູ່ ສປປ ລາວ ຕາມຂອບເຂດການໃຫ້ບໍລິການດູແລຊັບສິນ ທີ່ໄດ້ກຳນົດໄວ້ໃນ ມາດຕາ 8 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 3 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນທະນາຄານດູແລຊັບສິນຢູ່ ສປປ ລາວ.

## ໝວດທີ 2
## ການຮັບຮອງເປັນທະນາຄານດູແລຊັບສິນ

**ມາດຕາ 4 (ປັບປຸງ) ເງື່ອນໄຂການຮັບຮອງເປັນທະນາຄານດູແລຊັບສິນ**

ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງຂໍການຮັບຮອງເປັນທະນາຄານດູແລຊັບສິນ ຕ້ອງມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 86. ນອກຈາກນັ້ນ ຍັງມີເງື່ອນໄຂເພີ່ມເຕີມ ດັ່ງນີ້:

1. ມີລະບົບເຕັກໂນໂລຊີຂໍ້ມູນ-ຂ່າວສານ ເຊື່ອມໂຍງກັບພາກສ່ວນກ່ຽວຂ້ອງ ແລະ ສາມາດຮັບປະກັນຄວາມປອດໄພສູງ;

2. ບໍ່ເຄີຍລະເມີດລະບຽບກົດໝາຍ ແລະ ຂໍ້ຫ້າມຕ່າງໆ ທີ່ມີລັກສະນະຮ້າຍແຮງໃນຂົງເຂດການເງິນ-ການທະນາຄານຂອງ ສປປ ລາວ;

3. ຜູ້ບໍລິຫານ ແລະ ພະນັກງານ ຕ້ອງມີວຸດທິການສຶກສາລະດັບປະລິນຍາຕີຂຶ້ນໄປ ໃນຂະແໜງການເງິນ-ການທະນາຄານ, ການບັນຊີ ຫຼື ຂົງເຂດທີ່ກ່ຽວຂ້ອງ ແລະ ມີປະສົບການໃນຂະແໜງການດັ່ງກ່າວ 3 ປີຂຶ້ນໄປ, ບໍ່ເຄີຍຖືກສານຕັດສິນລົງໂທດທາງອາຍາ ກ່ຽວກັບການ ສໍ້ໂກງຊັບ, ຍັກຍອກຊັບ, ປອມແປງເອກະສານ, ຮັບ ຫຼື ໃຫ້ສິນບົນ, ສໍ້ລາດບັງຫຼວງ ຫຼື ຟອກເງິນ ແລະ ບໍ່ເຄີຍກະທຳຜິດ ກ່ຽວກັບທຸລະກິດດ້ານຫຼັກຊັບ ຫຼື ກະທຳຜິດທາງດ້ານການເງິນ;

4. ມີເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 5 (ປັບປຸງ) ເອກະສານປະກອບການຂໍຮັບຮອງເປັນທະນາຄານດູແລຊັບສິນ**

ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງຂໍຮັບຮອງເປັນທະນາຄານດູແລຊັບສິນ ຕ້ອງປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 87. ນອກຈາກນັ້ນ ຍັງມີເອກະສານເພີ່ມເຕີມ ດັ່ງນີ້:

1. ເອກະສານລາຍງານການເງິນ 2 ປີ ຄືນຫຼັງ ນັບແຕ່ວັນຍື່ນເອກະສານປະກອບການຂໍຮັບຮອງເປັນທະນາຄານດູແລຊັບສິນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເປັນຕົ້ນໄປ ໂດຍຜ່ານການກວດສອບຈາກບໍລິສັດກວດສອບ ຍົກເວັ້ນ ທະນາຄານທຸລະກິດທີ່ສ້າງຕັ້ງໃໝ່ ແລະ ບົດລາຍງານການດຳເນີນທຸລະກິດປະຈຳປີໃນ 1 ປີ ຜ່ານມາ;

2. ແຜນການດຳເນີນທຸລະກິດ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງ ຜູ້ລົງທຶນ ຫຼື ເປັນຕົວແທນ ໃນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງ ຜູ້ລົງທຶນ;

3. ເອກະສານລາຍງານຄວາມພ້ອມຂອງ ລະບົບເຕັກໂນໂລຊີ, ລະບົບຄຸ້ມຄອງພາຍໃນ, ລະບົບດຳເນີນງານ ແລະ ບຸກຄະລາກອນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ ຫຼື ເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ລົງທຶນ;

4. (ຮ່າງ)ສັນຍາຮ່ວມກັບ ສູນຮັບຝາກຫຼັກຊັບ ກໍລະນີຈະໃຫ້ ບໍລິການເປັນຜູ້ເກັບຮັກສາຊັບສິນ ຂອງກອງທຶນເພື່ອການລົງທຶນ ຫຼື ປົກປ້ອງສິດ ແລະ ຜົນປະໂຫຍດຂອງກອງທຶນຮ່ວມ ຕ້ອງມີສັນຍາກັບ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ຫຼື ກໍລະນີຈະໃຫ້ບໍລິການເປັນຜູ້ ເກັບຮັກສາຊັບສິນຂອງ ກອງທຶນສ່ວນບຸກຄົນ ຕ້ອງມີສັນຍາກັບ ບໍລິສັດຫຼັກຊັບ (ຖ້າມີ);

5. ຊີວະປະຫວັດຫຍໍ້, ໃບຢັ້ງຢືນວຸດທິການສຶກສາ, ປະສົບການ, ການຝຶກອົບຮົມ ແລະ ໃບແຈ້ງໂທດ (ບໍ່ໃຫ້ເກີນ 3 ເດືອນ) ຂອງຜູ້ບໍລິຫານ ແລະ ພະນັກງານ ທີ່ກ່ຽວຂ້ອງຂອງພະແນກ ຫຼື ໜ່ວຍງານ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ ຫຼື ເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ;

6. ເອກະສານອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 6 (ປັບປຸງ) ການພິຈາລະນາຮັບຮອງເປັນທະນາຄານດູແລຊັບສິນ**

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາ ກ່ຽວກັບການຮັບຮອງເປັນທະນາຄານດູແລຊັບສິນ ພາຍໃນເວລາ 30 ວັນ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ. ໃນກໍລະນີປະຕິເສດ ກໍໃຫ້ແຈ້ງຕອບເປັນລາຍລັກອັກສອນ ພ້ອມດ້ວຍເຫດຜົນ.

ໃນເວລາພິຈາລະນາຫາກເຫັນວ່າມີຄວາມຈຳເປັນ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດທວງເອົາເອກະສານ ແລະ ຂໍ້ມູນເພີ່ມເຕີມ ຫຼື ເຊີນຜູ້ທີ່ກ່ຽວຂ້ອງມາຊີ້ແຈງ ຫຼື ໃຫ້ຂໍ້ມູນ.

ພາຍຫຼັງໄດ້ຮັບໃບຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບແລ້ວ ຕ້ອງປະກາດຕໍ່ມວນຊົນ ຜ່ານພາຫະນະສື່ມວນຊົນ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບຮັບຮອງ ເປັນຕົ້ນໄປ.

## ໝວດທີ 3
## ຂອບເຂດການໃຫ້ບໍລິການ, ອາຍຸການຮັບຮອງ ແລະ ການຕໍ່ອາຍຸການຮັບຮອງ ຂອງທະນາຄານດູແລຊັບສິນ

**ມາດຕາ 7 ຂອບເຂດການໃຫ້ບໍລິການຂອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ສາມາດໃຫ້ບໍລິການ ໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ເກັບຮັກສາ ແລະ ຄຸ້ມຄອງ ຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ (Custody services);

2. ເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ໃນກອງທຶນເພື່ອການລົງທຶນ (Fund supervisory services).

ສຳລັບ ທະນາຄານດູແລຊັບສິນ ທີ່ໄດ້ຮັບອະນຸຍາດໃຫ້ບໍລິການເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງ ຜູ້ລົງທຶນ ໃນກອງທຶນເພື່ອການລົງທຶນ ແມ່ນສາມາດໃຫ້ບໍລິການໃນການເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ໄດ້.

**ມາດຕາ 8 ການເກັບຮັກສາ ແລະ ຄຸ້ມຄອງ ຊັບສິນຂອງຜູ້ລົງທຶນ**

ການເກັບຮັກສາ ແລະ ຄຸ້ມຄອງ ຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ແມ່ນການໃຫ້ບໍລິການເກັບຮັກສາ ແລະ ຄຸ້ມຄອງ ເງິນ, ຫຼັກຊັບ ແລະ ຊັບສິນອື່ນຂອງ ຜູ້ລົງທຶນ ໃຫ້ຄົບຖ້ວນ ແລະ ປອດໄພ ໂດຍການແຍກຊັບສິນອອກເປັນຂອງແຕ່ລະ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນແຕ່ລະກອງ ພ້ອມທັງ ມີການຄິດໄລ່ ແລະ ກວດນັບ ເປັນປະຈຳ.

**ມາດຕາ 9 ການເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ**

ການເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ແມ່ນການໃຫ້ບໍລິການເປັນຕົວແທນ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ຖືໜ່ວຍລົງທຶນ ໂດຍຜ່ານການຕິດຕາມ ແລະ ກວດກາ ການ ການເຄື່ອນໄຫວຂອງຜູ້ບໍລິຫານກອງທຶນເພື່ອການລົງທຶນ ໃນກອງທຶນຮ່ວມ.

**ມາດຕາ 10 (ໃໝ່) ອາຍຸການຮັບຮອງຂອງທະນາຄານດູແລຊັບສິນ**

ໃບຮັບຮອງຂອງທະນາຄານດູແລຊັບສິນ ມີອາຍຸການ 3 ປີ ນັບແຕ່ວັນໄດ້ຮັບໃບຮັບຮອງ ເປັນຕົ້ນໄປ.

**ມາດຕາ 11 (ໃໝ່) ການຕໍ່ອາຍຸການຮັບຮອງທະນາຄານດູແລຊັບສິນ**

ທະນາຄານດູແລຊັບສິນ ທີ່ຕ້ອງການຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການ ເກັບຮັກສາ, ຄຸ້ມຄອງຊັບສິນ, ເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ ຕ້ອງມີເງື່ອນໄຂຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 4 ແລະ ປະກອບເອກະສານຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 5 ຂອງຂໍ້ຕົກລົງສະບັບນີ້ ເພື່ອຍື່ນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ພິຈາລະນາ ຢ່າງໜ້ອຍ 45 ວັນ ກ່ອນວັນໝົດອາຍຸການຮັບຮອງ.

## ໝວດທີ 4
## ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ

**ມາດຕາ 12 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ ທີ່ໃຫ້ບໍລິການ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ**

ທະນາຄານດູແລຊັບສິນ ທີ່ໃຫ້ບໍລິການ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 89. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ເປີດ ແລະ ຄຸ້ມຄອງ ບັນຊີເງິນຝາກ ແລະ ຄຸ້ມຄອງບັນຊີຫຼັກຊັບຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ;
2. ໂອນເງິນເຂົ້າ-ອອກ ສປປ ລາວ ໃຫ້ແກ່ຜູ້ລົງທຶນທີ່ຢູ່ ຕ່າງປະເທດ ທີ່ເປັນລູກຄ້າຂອງຕົນ;
3. ບໍລິການໃນການແລກປ່ຽນເງິນຕາຕ່າງປະເທດ ເພື່ອເປົ້າໝາຍຊື້ ຂາຍຫຼັກຊັບ;
4. ເປັນຕົວແທນໃນການສະສາງ-ຊຳລະ ກ່ຽວກັບການຊື້ ຂາຍຫຼັກຊັບ ໃຫ້ແກ່ລູກຄ້າຂອງຕົນ;
5. ຮັບ ແລະ ສົ່ງມອບເງິນປັນຜົນ, ດອກເບ້ຍ ແລະ ຜົນປະໂຫຍດອື່ນ ທີ່ເກີດຈາກຊັບສິນ ຫຼື ຫຼັກຊັບຂອງຜູ້ລົງທຶນ ໃຫ້ມີຄວາມຮັບປະກັນ ແລະ ປອດໄພ;
6. ລາຍງານ ກ່ຽວກັບການເຄື່ອນໄຫວໃນການເກັບຮັກສາຊັບສິນຂອງລູກຄ້າ ຫຼື ຜູ້ລົງທຶນ ໃຫ້ແກ່ ລູກຄ້າ ຫຼື ຜູ້ລົງທຶນ ຊາບໃນແຕ່ລະເດືອນ ຫຼື ຕາມການຮ້ອງຂໍຂອງ ລູກຄ້າ ຫຼື ຜູ້ລົງທຶນ ໃນແຕ່ລະໄລຍະ;
7. ບັນທຶກ, ກວດນັບ ຫຼື ກວດກາ ຊັບສິນຂອງຜູ້ລົງທຶນໃຫ້ມີຄວາມຖືກຕ້ອງ ຢ່າງເປັນປົກກະຕິ ພ້ອມທັງສົມທຽບຈຳນວນຫຼັກຊັບຂອງຜູ້ລົງທຶນທີ່ມີໃນບັນຊີຫຼັກຊັບຢູ່ສູນຮັບຝາກຫຼັກຊັບ ກັບ ຈຳນວນຫຼັກຊັບຂອງຜູ້ລົງທຶນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ;

8. ຊອກຮູ້ຂໍ້ມູນ ກ່ຽວກັບ ຜູ້ລົງທຶນ, ແຫຼ່ງທີ່ມາຂອງເງິນ, ຖານະການເງິນ ແລະ ຜູ້ໄດ້ຮັບຜົນປະໂຫຍດທີ່ແທ້ຈິງ ກ່ອນການເຮັດ ສັນຍາ ຫຼື ຂໍ້ຕົກລົງ ກ່ຽວກັບການໃຫ້ບໍລິການ;

9. ເຮັດສັນຍາການຮັກສາຊັບສິນ ກັບ ຜູ້ລົງທຶນຂອງຕົນ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ (ກໍລະນີ ເກັບຮັກສາຊັບສິນຂອງກອງທຶນເພື່ອການລົງທຶນ);

10. ໂອນຊັບສິນຂອງຜູ້ລົງທຶນຈາກ ທະນາຄານດູແລຊັບສິນຂອງຕົນ ໄປຍັງ ທະນາຄານດູແລຊັບສິນອື່ນ ຕາມການສະເໜີຂອງ ຜູ້ລົງທຶນ ຫຼື ອົງການທີ່ມີສິດອຳນາດກ່ຽວຂ້ອງ;

11. ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ກ່ຽວກັບການໂອນຫຼັກຊັບຈາກ ບຸກຄົນໜຶ່ງ ໃຫ້ບຸກຄົນອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

12. ກໍ່ສ້າງບຸກຄະລາກອນຂອງຕົນ ໃຫ້ມີຄວາມຊຳນິຊຳນານກ່ຽວກັບວຽກງານ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງ ຜູ້ລົງທຶນ;

13. ເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນ ເຂົ້າຮ່ວມ ແລະ ລົງຄະແນນສຽງ ໃນກອງປະຊຸມຜູ້ຖືຮຸ້ນ ຕາມການມອບໝາຍຂອງ ຜູ້ລົງທຶນ;

14. ເປັນຜູ້ຕາງໜ້າໃຫ້ແກ່ຜູ້ລົງທຶນຕ່າງປະເທດ ເພື່ອດຳເນີນການຊຳລະສະສາງການຊື້ ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດຢູ່ ສປປ ລາວ;

15. ແຈ້ງ ແລະ ສະໜອງ ຂໍ້ມູນກ່ຽວຂ້ອງທີ່ສຳຄັນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້ໃຫ້ແກ່ ຜູ້ລົງທຶນ ຊາບ;

16. ສະໜອງຂໍ້ມູນກ່ຽວກັບຊັບສິນຂອງຜູ້ລົງທຶນ ແລະ ຂໍ້ມູນອື່ນ ຕາມການຮ້ອງຂໍຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

17. ປະຕິບັດວຽກງານຢ່າງມີ ຈັນຍາບັນ, ດ້ວຍຄວາມສັດຊື່, ຍຸຕິທຳ, ຄວາມສະເໝີພາບ ແລະ ປົກປ້ອງຜົນປະໂຫຍດຂອງຜູ້ລົງທຶນ;

18. ສ້າງກົນໄກ ຫຼື ປ້ອງກັນຂໍ້ຂັດແຍ່ງທາງດ້ານຜົນປະໂຫຍດ;

19. ປະຕິບັດໜ້າທີ່ແທນຜູ້ລົງທຶນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດອື່ນ ທີ່ຜູ້ລົງທຶນຄວນຈະໄດ້ຮັບ;

20. ຮຽກເອົາ ຫຼື ສະໜອງຂໍ້ມູນ ແລະ ເອກະສານ ກັບຜູ້ລົງທຶນ ທີ່ຕິດກັບວຽກງານຕ້ານ ສະກັດກັ້ນ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ;

21. ຄິດໄລ່ມູນຄ່າຊັບສິນສຸດທິຂອງກອງທຶນຮ່ວມປະຈຳວັນ ໂດຍການສົມທຽບກັບ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ;

22. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນສັນຍາກັບຜູ້ລົງທຶນ.

**ມາດຕາ 13 (ປັບປຸງ) ສິດ ແລະ ໜ້າທີ່ ຂອງທະນາຄານດູແລຊັບສິນ ທີ່ໃຫ້ບໍລິການ ເປັນຕົວແທນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ**

ທະນາຄານດູແລຊັບສິນ ທີ່ໃຫ້ບໍລິການເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້. ນອກຈາກນັ້ນ ຍັງມີສິດ ແລະ ໜ້າທີ່ເພີ່ມເຕີມ ດັ່ງນີ້:

1. ຮັບປະກັນການ ຊຳລະສະສາງ, ຮັບ, ສົ່ງມອບ, ປ່ຽນແປງ ແລະ ໂອນ ຊັບສິນຂອງກອງທຶນເພື່ອການລົງທຶນ ຕາມຄຳສັ່ງຂອງ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ;

2. ກວດສອບ, ຮັບຮອງ ແລະ ຕິດຕາມ ຄວາມຖືກຕ້ອງ ໃນການຄຳນວນມູນຄ່າຊັບສິນ, ມູນຄ່າຊັບສິນສຸດທິ, ມູນຄ່າໜ່ວຍລົງທຶນ ແລະ ລາຄາຮັບຊື້ ຂາຍ ໜ່ວຍລົງທຶນທີ່ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ໄດ້ຄຳນວນໄວ້ ເພື່ອປະກາດໃຫ້ມວນຊົນ ຮັບຊາບ;

3. ຄຸ້ມຄອງ ການເພີ່ມ ແລະ ການຫຼຸດ ຈຳນວນໜ່ວຍລົງທຶນຂອງກອງທຶນເພື່ອການລົງທຶນ;

4. ທົບທວນ, ກວດກາ ແລະ ປະເມີນຜົນການປະຕິບັດ ສິດ ແລະ ໜ້າທີ່ ຂອງຜູ້ບໍລິຫານກອງທຶນເພື່ອການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນ ກົດລະບຽບ ຫຼື ສັນຍາຄຸ້ມຄອງບໍລິຫານ ກອງທຶນເພື່ອການລົງທຶນ;

5. ເປັນຜູ້ຕາງໜ້າໃຫ້ແກ່ ຜູ້ລົງທຶນຕ່າງປະເທດ ເພື່ອດຳເນີນການຊໍາລະສະສາງການຊື້ ຂາຍຫຼັກຊັບ ຂອງຜູ້ລົງທຶນຕ່າງປະເທດຢູ່ ສປປ ລາວ;

6. ລາຍງານການເຄື່ອນໄຫວ ກ່ຽວກັບການເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃຫ້ແກ່ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ;

7. ເປັນຕົວແທນໃຫ້ແກ່ຜູ້ຖືໜ່ວຍລົງທຶນໃນການ ຮ້ອງຟ້ອງ ຫຼື ແຈ້ງຄວາມຕໍ່ ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ໃນກໍລະນີບໍລິສັດດັ່ງກ່າວ ປະຕິບັດໜ້າທີ່ບໍ່ສອດຄ່ອງກັບສັນຍາ ຫຼື ລະບຽບກົດໝາຍທີ່ກ່ຽວຂ້ອງທີ່ກໍ່ໃຫ້ເກີດຜົນເສຍຫາຍໃຫ້ແກ່ຜູ້ຖືໜ່ວຍລົງທຶນ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ລະບຸໄວ້ໃນສັນຍາກັບຜູ້ລົງທຶນ.

## ໝວດທີ 5
## ການປ່ຽນແປງລາຍການ, ການໂຈະ, ການຖອນ ແລະ ການຊໍາລະສະສາງ

### ມາດຕາ 14 ການປ່ຽນແປງລາຍການ ຂອງທະນາຄານດູແລຊັບສິນ

ທະນາຄານດູແລຊັບສິນ ຕ້ອງຂໍອະນຸຍາດຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເມື່ອມີການປ່ຽນແປງໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ການປ່ຽນແປງປະເພດການເຄື່ອນໄຫວທຸລະກິດ;

2. ການຄວບ ຫຼື ການແຍກ ກິດຈະການ;

3. ການໂຈະການດຳເນີນທຸລະກິດເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງຜູ້ລົງທຶນ ຫຼື ດູແລຜົນປະໂຫຍດຂອງກອງທຶນເພື່ອການລົງທຶນ ຍົກເວັ້ນການໂຈະເນື່ອງຈາກມີການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະພິຈາລະນາການຂໍອະນຸຍາດປ່ຽນແປງລາຍການຂອງທະນາຄານດູແລຊັບສິນ ພາຍໃນເວລາ 30 ວັນ ນັບແຕ່ວັນທີ່ໄດ້ຮັບໜັງສືສະເໜີຂໍອະນຸຍາດປ່ຽນແປງລາຍການ ຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

ທະນາຄານດູແລຊັບສິນ ຕ້ອງລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບ ພາຍໃນເວລາ 5 ວັນ ລັດຖະການ ນັບແຕ່ວັນທີ່ມີການປ່ຽນແປງ ກ່ຽວກັບ ການເພີ່ມ ຫຼື ຫຼຸດທຶນຈົດທະບຽນ, ຊື່ ແລະ ສະຖານທີ່ຕັ້ງ, ໂຄງປະກອບຜູ້ຖືຮຸ້ນແຕ່ ຫ້າສ່ວນຮ້ອຍ (5%) ຂຶ້ນໄປ, ສະມາຊິກສະພາບໍລິຫານ ແລະ ຄະນະອຳນວຍການເປັນຕົ້ນໄປ.

### ມາດຕາ 15 ການໂຈະການຮັບຮອງເປັນທະນາຄານດູແລຊັບສິນ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ມີສິດສັ່ງໂຈະການຮັບຮອງເປັນທະນາຄານດູແລຊັບສິນ ບາງສ່ວນ ຫຼື ທັງໝົດ ຊົ່ວຄາວ ຫຼື ຕາມຄຳສັ່ງຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ.

ພາຍຫຼັງທະນາຄານດູແລຊັບສິນ ຖືກໂຈະການຮັບຮອງແລ້ວ ຕ້ອງຮີບຮ້ອນປັບປຸງແກ້ໄຂບັນຫາຂອງຕົນໃຫ້ສຳເລັດ ຕາມກຳນົດເວລາທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ກຳນົດໄວ້.

ທະນາຄານດູແລຊັບສິນ ທີ່ຖືກສັ່ງໂຈະການຮັບຮອງ ຈະບໍ່ສາມາດໃຫ້ບໍລິການກ່ຽວກັບ ເກັບຮັກສາ ແລະ ຄຸ້ມຄອງຊັບສິນຂອງ ຜູ້ລົງທຶນ ຫຼື ເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ລາຍໃໝ່ໄດ້.

### ມາດຕາ 16 ການຖອນໃບຮັບຮອງເປັນທະນາຄານດູແລຊັບສິນ

ທະນາຄານດູແລຊັບສິນ ຈະຖືກຖອນໃບຮັບຮອງເປັນທະນາຄານດູແລຊັບສິນ ໃນກໍລະນີໃດໜຶ່ງ ຫຼື ທັງໝົດ ດັ່ງນີ້:

1. ຕາມການຮ້ອງຂໍຂອງທະນາຄານດູແລຊັບສິນ ໂດຍອີງໃສ່ມະຕິຂອງກອງປະຊຸມຜູ້ຖືຮຸ້ນ;
2. ໄດ້ຮັບການຮັບຮອງເປັນທະນາຄານດູແລຊັບສິນ ບົນພື້ນຖານການສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ທີ່ສ້າງຜົນເສຍຫາຍ ຢ່າງຫຼວງຫຼາຍຕໍ່ ຄວາມໝັ້ນຄົງຂອງທະນາຄານດູແລຊັບສິນ ແລະ ລະບົບຕະຫຼາດທຶນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
3. ບໍ່ສາມາດແກ້ໄຂບັນຫາ ຕາມສາເຫດຂອງການສັ່ງໂຈະການຮັບຮອງເປັນທະນາຄານດູແລຊັບສິນ ຕາມທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ພາຍໃນເວລາທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ກຳນົດໃຫ້;
4. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທີ່ສົ່ງຜົນສະທ້ອນຮ້າຍແຮງຕໍ່ ລະບົບຕະຫຼາດທຶນ ຕາມການພິຈາລະນາຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
5. ຖືກຖອນໃບອະນຸຍາດດຳເນີນທຸລະກິດທະນາຄານຈາກ ທະນາຄານແຫ່ງ ສປປ ລາວ;
6. ມີຄຳຕັດສິນ ຫຼື ຄຳພິພາກສາ ຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດ;
7. ຖອນໃນກໍລະນີອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ພາຍຫຼັງທີ່ທະນາຄານດູແລຊັບສິນ ຖືກຖອນໃບຮັບຮອງເປັນທະນາຄານດູແລຊັບສິນແລ້ວ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕ້ອງປະກາດໃຫ້ມວນຊົນຊາບຢ່າງກວ້າງຂວາງ ໂດຍຜ່ານພາຫະນະສື່ມວນຊົນເປັນເວລາ 5 ວັນ ຕໍ່ເນື່ອງ ນັບແຕ່ວັນທີ່ໄດ້ຖືກຖອນໃບຮັບຮອງເປັນທະນາຄານດູແລຊັບສິນ ເປັນຕົ້ນໄປ.

### ມາດຕາ 17 ການຊຳລະສະສາງຂອງທະນາຄານດູແລຊັບສິນ

ທະນາຄານດູແລຊັບສິນ ທີ່ຖືກຖອນໃບຮັບຮອງເປັນທະນາຄານດູແລຊັບສິນ ຕາມການກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຕ້ອງດຳເນີນການຊຳລະສະສາງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ທະນາຄານດູແລຊັບສິນ ທີ່ຖືກຖອນໃບຮັບຮອງເປັນທະນາຄານດູແລຊັບສິນ ຕ້ອງໂອນບັນຊີລາຍຊື່ ລວມທັງຊັບສິນຂອງ ຜູ້ລົງທຶນ ແລະ ກອງທຶນເພື່ອການລົງທຶນ ໄປໃຫ້ທະນາຄານດູແລຊັບສິນອື່ນ ໃນທັນທີ ເພື່ອສືບຕໍ່ໃຫ້ບໍລິການຕາມຄຳສັ່ງຂອງ ຜູ້ລົງທຶນ ຫຼື ບໍລິສັດບໍລິຫານກອງທຶນເພື່ອການລົງທຶນ ບົນພື້ນຖານການເຫັນດີຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 6
## ການລາຍງານ ແລະ ເປີດເຜີຍຂໍ້ມູນ, ຄ່າບໍລິການ ແລະ ຂໍ້ຫ້າມ

### ມາດຕາ 18 (ໃໝ່) ການລາຍງານ ແລະ ເປີດເຜີຍຂໍ້ມູນ

ທະນາຄານດູແລຊັບສິນ ຕ້ອງລາຍງານຂໍ້ມູນຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ເປີດເຜີຍຂໍ້ມູນຜ່ານ ເວັບໄຊຂອງທະນາຄານຕົນ ແລະ ພາຫະນະສື່ມວນຊົນອື່ນຕາມຄວາມເໝາະສົມ ດັ່ງນີ້:

1. ລາຍງານບົດສະຫຼຸບການໃຫ້ບໍລິການຂອງຕົນ ປະຈຳ ໄຕມາດ 1 ແລະ ໄຕມາດ 3 ພາຍໃນເວລາ 15 ວັນ ນັບແຕ່ວັນສິ້ນສຸດແຕ່ລະໄຕມາດ ເປັນຕົ້ນໄປ;
2. ລາຍງານບົດສະຫຼຸບການໃຫ້ບໍລິການຂອງຕົນ ປະຈຳ 6 ເດືອນຕົ້ນປີ ແລະ ປະຈຳປີ ພາຍໃນເວລາ 60 ວັນ ນັບແຕ່ວັນສິ້ນສຸດປີການບັນຊີ ເປັນຕົ້ນໄປ;
3. ເປີດເຜີຍຜົນການຄິດໄລ່ມູນຄ່າຊັບສິນສຸດທິປະຈຳວັນຂອງກອງທຶນຮ່ວມ ໃຫ້ແກ່ ຜູ້ຖືໜ່ວຍລົງທຶນຊາບ;
4. ຂໍ້ມູນ ແລະ ເອກະສານອື່ນ ຕາມການຮ້ອງຂໍຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

### ມາດຕາ 19 (ປັບປຸງ) ຄ່າບໍລິການ

ທະນາຄານດູແລຊັບສິນ ຕ້ອງເສຍຄ່າບໍລິການໃຫ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ດັ່ງນີ້:

1. ຄ່າຍື່ນສຳນວນຄຳຮ້ອງຂໍການຮັບຮອງເປັນ ທະນາຄານດູແລຊັບສິນ ຈຳນວນ 5.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຍື່ນສຳນວນຄຳຮ້ອງຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;
2. ຄ່າອອກໃບຮັບຮອງເປັນ ທະນາຄານດູແລຊັບສິນ ຈຳນວນ 15.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;
3. ຄ່າຕໍ່ໃບຮັບຮອງເປັນ ທະນາຄານດູແລຊັບສິນ ຈຳນວນ 10.000.000 ກີບ ຕໍ່ຄັ້ງ ແລະ ຕ້ອງຊຳລະເງິນພາຍໃນວັນທີ່ໄດ້ຮັບໃບຮັບຮອງ;
4. ຄ່າຄຸ້ມຄອງປະຈຳປີ ຈຳນວນ 5.000.000 ກີບ ແລະ ຕ້ອງຊຳລະເງິນພາຍໃນ ໄຕມາດ 1 ຂອງປີຖັດໄປ. ຍົກເວັ້ນປີທີ່ໄດ້ຮັບຮອງເປັນທະນາຄານດູແລຊັບສິນ ໃນໄລຍະ 6 ເດືອນທ້າຍປີ.

ກໍລະນີ ທະນາຄານດູແລຊັບສິນ ຫາກບໍ່ໄດ້ໃຫ້ການບໍລິການລູກຄ້າພາຍໃນປີນັ້ນ ແມ່ນຈະບໍ່ໄດ້ເສຍຄ່າຄຸ້ມຄອງປະຈຳປີ.

### ມາດຕາ 20 (ປັບປຸງ) ຂໍ້ຫ້າມ

ຫ້າມ ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນທະນາຄານດູແລຊັບສິນ ມີພຶດຕິກຳໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ມາດຕາ 176. ນອກຈາກນັ້ນ ຍັງມີຂໍ້ຫ້າມເພີ່ມເຕີມ ດັ່ງນີ້:

1. ໃຫ້ບໍລິການເປັນທະນາຄານດູແລຊັບສິນ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ;

2. ໂອນ ຫຼື ມອບ ໃບຮັບຮອງເປັນທະນາຄານດູແລຊັບສິນ ໃຫ້ທະນາຄານທຸລະກິດ ພາຍໃນ ຫຼື ຕ່າງປະເທດ ຫຼື ພາກສ່ວນອື່ນ ເຄື່ອນໄຫວແທນຕົນ;

3. ບໍ່ລາຍງານຕໍ່ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 14 ວັກທີສາມ ແລະ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້;

4. ໃຫ້ບໍລິການເປັນທະນາຄານດູແລຊັບສິນ ໃຫ້ແກ່ລູກຄ້າໃນກໍລະນີທີ່ ຖືກໂຈະ ຫຼື ຖືກຖອນ ໃບຮັບຮອງເປັນທະນາຄານດູແລຊັບສິນ;

5. ໂອນ ຫຼື ນໍາໃຊ້ ຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ;

6. ເກັບຮັກສາຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ໂດຍບໍ່ແຍກອອກຈາກຊັບສິນຂອງ ຕົນ ຫຼື ຂອງຜູ້ລົງທຶນແຕ່ລະລາຍ ແລະ ແຕ່ລະກອງທຶນເພື່ອການລົງທຶນ;

7. ມີພຶດຕິກໍາອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

8. ຂໍ້ຫ້າມອື່ນ ຕາມການກໍານົດຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

## ໝວດທີ 7
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 21 ນະໂຍບາຍຕໍ່ຜູ້ມີຜົນງານ

ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການຂອງທະນາຄານດູແລຊັບສິນທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ແລະ ວຽກງານທະນາຄານດູແລຊັບສິນ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ ຫຼື ນະໂຍບາຍອື່ນ ຕາມການກໍານົດໄວ້ໃນລະບຽບການສະເພາະ.

### ມາດຕາ 22 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ

ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການຂອງທະນາຄານດູແລຊັບສິນທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດ ສຶກສາອົບຮົມ ຫຼື ກ່າວເຕືອນ, ປັບໃໝ ແລະ ມາດຕະການເພີ່ມເຕີມດັ່ງນີ້:

ມາດຕະການ ສຶກສາອົບຮົມ ຫຼື ກ່າວເຕືອນ ແມ່ນໃນກໍລະນີທີ່ມີພຶດຕິກໍາ ຫຼື ການລະເມີດໃນລັກສະນະດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທໍາອິດ ທີ່ມີລັກສະນະເບົາ ເປັນຕົ້ນ ຍື່ນເອກະສານຂໍຕໍ່ອາຍຸການຮັບຮອງ ເພື່ອສືບຕໍ່ໃຫ້ບໍລິການ ເກັບຮັກສາ, ຄຸ້ມຄອງ ຊັບສິນ, ເປັນຕົວແທນໃນການປົກປ້ອງ ສິດ ແລະ ຜົນປະໂຫຍດ ຂອງຜູ້ລົງທຶນ ກ່ອນວັນທີ່ໃບຮັບຮອງ ຈະໝົດອາຍຸ ຕໍ່າກວ່າ 45 ວັນ, ບໍ່ໃຫ້ການຮ່ວມມືກັບ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ, ບໍ່ສະໜອງຂໍ້ມູນ ແລະ ເອກະສານ ຕາມການຮຽກຮ້ອງຂອງ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ຫຼື ພາກສ່ວນອື່ນທີ່ກ່ຽວຂ້ອງ ແລະ ກໍລະນີການລະເມີດອື່ນທີ່ສ້າງຄວາມເສຍຫາຍບໍ່ເກີນ 1.000.000 ກີບ;

2. ການລະເມີດບໍ່ມີການຮ້ອງຟ້ອງ ຫຼື ແຈ້ງຄວາມຂອງຜູ້ຖືກເສຍຫາຍ ແລະ ຄູ່ກໍລະນີ ສາມາດຕົກລົງຫຼື ແກ້ໄຂຮ່ວມກັນໄດ້;

3. ມີພຶດຕິກຳທີ່ຂັດກັບຂໍ້ຕົກລົງສະບັບນີ້ ແຕ່ບໍ່ແມ່ນການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ຂອງຂໍ້ຕົກລົງສະບັບນີ້;

4. ມີພຶດຕິກຳອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ມາດຕະການປັບໃໝ ແມ່ນໃນກໍລະນີທີ່ມີພຶດຕິກຳ ຫຼື ການລະເມີດໃນລັກສະນະ ດັ່ງລຸ່ມນີ້:

1. ການເປັນລະເມີດຄັ້ງທຳອິດ ທີ່ມີລັກສະນະຮ້າຍແຮງ ຊຶ່ງການລະເມີດສ້າງຄວາມເສຍຫາຍເກີນ 1.000.000 ກີບ ຫຼື ຖືກປະຕິບັດມາດຕະການສຶກສາອົບຮົມ ຫຼື ກ່າວເຕືອນແລ້ວ ແຕ່ຍັງສືບຕໍ່ລະເມີດເປັນຄັ້ງທີ 2 ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

2. ໃຫ້ບໍລິການເປັນທະນາຄານດູແລຊັບສິນ ໂດຍບໍ່ໄດ້ຮັບການຮັບຮອງຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະຖືກປັບໃໝ 3 ເທົ່າ ຂອງລາຍຮັບທີ່ໄດ້ຈາກການບໍລິການດັ່ງກ່າວ. ກໍລະນີ ບໍ່ມີລາຍຮັບ ຫຼື ມີລາຍຮັບຕໍ່າກວ່າ 50.000.000 ກີບ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ ພ້ອມທັງຖືກສັ່ງໃຫ້ຢຸດເຊົາການດຳເນີນທຸລະກິດດັ່ງກ່າວ;

3. ໂອນ ຫຼື ມອບ ໃບຮັບຮອງເປັນທະນາຄານດູແລຊັບສິນໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ທັງພາຍໃນ ຫຼື ຕ່າງປະເທດ ເຄື່ອນໄຫວແທນຕົນ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

4. ບໍ່ລາຍງານຕໍ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຕາມການກຳນົດໄວ້ໃນ ມາດຕາ 14 ວັກທີສາມ ແລະ ມາດຕາ 18 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ແຕ່ 15.000.000 ກີບ ຫາ 30.000.000 ກີບຕໍ່ຄັ້ງ;

5. ໃຫ້ບໍລິການເປັນທະນານຄານດູແລຊັບສິນ ໃຫ້ແກ່ລູກຄ້າ ໃນກໍລະນີທີ່ຖືກມາດຕະການໂຈະໃຫ້ບໍລິການເປັນທະນາຄານດູແລຊັບສິນ ຈະຖືກປັບໃໝ ແຕ່ 5.000.000 ກີບ ຫາ 10.000.000 ກີບ;

6. ໂອນ ຫຼື ນຳໃຊ້ ຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ເພື່ອຜົນປະໂຫຍດຂອງຕົນ ຫຼື ບຸກຄົນອື່ນ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ;

7. ເກັບຮັກສາຊັບສິນຂອງ ຜູ້ລົງທຶນ ຫຼື ກອງທຶນເພື່ອການລົງທຶນ ໂດຍບໍ່ແຍກອອກຈາກຊັບສິນຂອງ ຕົນ ຫຼື ຂອງຜູ້ລົງທຶນແຕ່ລະລາຍ ແລະ ແຕ່ລະກອງທຶນເພື່ອການລົງທຶນ ຈະຖືກປັບໃໝ ແຕ່ 30.000.000 ກີບ ຫາ 50.000.000 ກີບ.

ມາດຕະການເພີ່ມເຕີມຕໍ່ ທະນາຄານດູແລຊັບສິນ ມີດັ່ງນີ້:

1. ໃຫ້ແກ້ໄຂການລະເມີດຂອງຕົນຄືນ ໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ໂຈະການໃຫ້ບໍລິການເປັນທະນາຄານດູແລຊັບສິນ;

3. ຖອນໃບຮັບຮອງເປັນທະນາຄານດູແລຊັບສິນ;

4. ເປີດເຜີຍ ກ່ຽວກັບການລະເມີດຂໍ້ຫ້າມ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ລົງໃນເວັບໄຊຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ຕະຫຼາດຫຼັກຊັບ ພາຍຫຼັງທີ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ອອກຂໍ້ຕົກລົງປັບໃໝ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 23 ການຈັດຕັ້ງປະຕິບັດ**

ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງກັບການໃຫ້ບໍລິການເປັນທະນາຄານດູແລຊັບສິນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນຢ່າງເຂັ້ມງວດ.

**ມາດຕາ 24 (ປັບປຸງ) ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນ ລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການຮັບຮອງທະນາຄານດູແລຊັບສິນ ສະບັບເລກທີ 016/ຄຄຊ, ລົງວັນທີ 28 ມິຖຸນາ 2019.

ປະທານຄະນະກໍາມະການຄຸ້ມຄອງຫຼັກຊັບ

ຄະນະກໍາມະການຄຸ້ມຄອງຫຼັກຊັບ
ປະທານ

ສອນໄຊ ສິດພະໄຊ